ແຂວງສາລະວັນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງສາລະວັນ
ພະແນກ ສາທາລະນະສຸກ

ເລກທີ 228 /ສຂທ.ສວ

ສາລະວັນ, ລົງວັນທີ: 01.09.26

ແຈ້ງການປະມູນ

- ເຖິງ: ບັນດາບໍລິສັດຮັບເໝົາກໍ່ສ້າງເຄຫາສະຖານ
- ເລື່ອງ: ແຈ້ງເຊີນເຂົ້າຮ່ວມປະມູນໂຄງການສ້ອມແປງ, ຕໍ່ເຕີມອາຄານແມ່ ແລະ ເດັກໂຮງໝໍແຂວງ ສາລະວັນ ດ້ວຍທຶນຂອງລັດ
- ອີງຕາມ: ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍການລົງທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017.
- ອີງຕາມ: ມະຕິຂອງສະພາປະຊາຊົນ ສະບັບເລກທີ 135/ຄຊສຂ.ສວ ລົງວັນທີ 7 ກໍລະກົດ ປີ 2026
- ອີງຕາມ: ໃບແຈ້ງແຜນລາຍຈ່າຍ ງົບປະມານແຫ່ງລັດສະບັບ ເລກທີ 117/ກງ.ສວ ລົງວັນທີ 14/7/2026
- ອີງຕາມ: ຂໍ້ຕົກລົງວ່າດ້ວຍການອະນຸມັດໃຫ້ພະແນກສາທາລະນະສຸກແຂວງສາລະວັນ ທາບທາມປະມູນ ຈັດຊື້ຈັດຈ້າງ ອຸປະກອນການແພດ ແລະ ໂຄງການສ້ອມແປງຕໍ່ເຕີມອາຄານແມ່ ແລະ ເດັກ ດ້ວຍທຶນຂອງລັດ. ສະບັບເລກທີ 1018/ຄປຂ, ລົງວັນທີ 1.09.2026

ພະແນກ ສາທາລະນະສຸກ ແຂວງສາລະວັນ ຂໍຖືເປັນກຽດ ແຈ້ງເຊີນມາ ຍັງບັນດາບໍລິສັດ ທີ່ມີກົດຈະການກໍ່ສ້າງ, ທີ່ມີຄວາມສົນໃຈ,ມີທ່າແຮງ ໃນການເຂົ້າຮ່ວມແຂ່ງຂັນການປະມູນລາຄາຫ້ວໜ່ວຍ ແບບເປີດກ້ວາງພາຍໃນ ສາມາດຊື້ເອກະສານປະມູນໄດ້ທີ່ ພະແນກສາທາລະນະສຸກ ແຂວງ ສາລະວັນ (ສປປ ລາວ) ໃນລະຫວ່າງ ວັນທີ 01/ 09 / 2026 - 06 /10/2026 ເປັນຕົ້ນໄປ. ໃນໂມງລັດຖະການໃນລາຄາ: 1,000,000 ກີບ (ໜຶ່ງລ້ານ ກີບ) ຕໍ່ເອກະສານໜຶ່ງຊຸດໂດຍບໍ່ມີການທົດແທນ ແລະ ສົ່ງເງິນຄືນ;

- ເງື່ອນໄຂການປະມູນທາບທາມລາ ແມ່ນອະນຸຍາດໃຫ້ທຸກໆ ບໍລິສັດທີ່ມີຄວາມເໝາະສົມ, ມີໃບດຳເນີນທຸລະກິດ, ໃບທະບຽນວິສະຫາກິດຖືກຕ້ອງຕາມກົດໝາຍ, ມີໃບຢັ້ງຢືນຖານະການເງິນ, ມີຜົນງານໃນການກໍ່ສ້າງຜ່ານມາ,ມີປະສົບການໃນດ້ານກ້ານກໍ່ສ້າງ, ມີທຶນໝຸນວຽນຢ່າງຕ່ຳ50% ຂອງມູນຄ່າສະເໜີ ແລະ ເອກະສານປະມູນມີອາຍຸ 90 ວັນ ກ່ອນການເປີດຊອງປະມູນ. ພ້ອມທັງ ເອກະສານຄ້ຳປະກັນປະມູນ ໃນມູນຄ່າຕ່ຳສຸດ 2% (ສອງເປີເຊັນ) ຂອງມູນຄ່າສະເໜີປະມູນ, ແມ່ນຈະຕ້ອງຖືກສົ່ງໃຫ້ ພະແນກສາທາລະນະສຸກ ແຂວງສາລະວັນ ກ່ອນເວລາ ເວລາ:14.00 ໂມງ ຂອງວັນທີ 07/10/2026 ຊຶ່ງຖືວ່າເປັນວັນ ແລະ ເວລາເປີດຊອງປະມູນ ເອກະສານການປະມູນ ແລະ ເອກະສານຄ້ຳປະກັນການປະມູນ ຈະຕ້ອງສາມາດນຳໃຊ້ໄດ້ໃນໄລຍະເວລາ ບໍ່ຕ່ຳກ່ວາ 30 ວັນ, ນັບຈາກມື້ ທີ່ມີການເປີດຊອງປະມູນ, ເອກະສານປະມູນ ພ້ອມທັງເອກະສານຕ່າງໆທີ່ກ່ຽວຂ້ອງ ແມ່ນຈະໄດ້ເປີດຊ້ອງໜ້າ ຄະນະກຳມະການປະມູນສົບທຽບລາຄາຈັດຊື້ ແລະ ຜູ້ຕາງໜ້າຂອງບັນດາບໍລິສັດທີ່ ໄດ້ຍື່ນຊອງປະມູນ ທີ່ມີຈຸດປະສົງຢາກເຂົ້າຮ່ວມ ໃນການເປີດຊອງປະມູນດັ່ງກ່າວ.

ເຊັນແທນ ຫົວໜ້າພະແນກ

ສອບຖາມຂໍ້ມູນຕິດຕໍ່ພົວພັນ: 034 211218

ພະແນກ ສາທາລະນະສຸກ ແຂວງ ສາລະວັນ

ດຣ ສຸກສະຫວັດ ພົມບຸນຍໍ